ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຄຸ້ມຄອງຊັບສິນຂອງລັດ

ເລກທີ1088/ກຊລ
ນະຄອນຫຼວງວຽງຈັນ, ວັນທີ 22... ພຶດສະພາ 2020

# ແຈ້ງການ

**ເຖິງ :** ທ່ານ ຫົວໜ້າພະແນກການເງິນ ປະຈຳແຂວງ, ນະຄອນຫຼວງ ທີ່ນັບຖື.
- ຫົວໜ້າຂະແໜງຄຸ້ມຄອງຊັບສິນຂອງລັດ ປະຈຳແຂວງ, ນະຄອນຫຼວງ ທີ່ນັບຖື.

**ເລື່ອງ :** ການຈັດຕັ້ງປະຕິບັດ ວິທີຄິດໄລ່ ອັດຕາຈົດທະບຽນເອກະສານ ສັນຍາຊື້-ຂາຍ ປະເພດສິນຄ້າຕ່າງໆ ທີ່ນຳເຂົ້າ ແລະ ສົ່ງອອກ ຢູ່ບັນດາສາງປ່ຽນຖ່າຍສິນຄ້າ.

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນຂອງລັດ ( ສະບັບປັບປຸງ) ເລກທີ 14/ສພຊ ລົງວັນທີ 5 ກໍລະກົດ 2012;
- ອີງຕາມ ລັດຖະບັດຍັດ ຂອງປະທານປະເທດ ວ່າດວ້ຍຄ່າທຳນຽມ ແລະ ຄ່າບໍລິການ ( ສະບັບປັບປຸງ ສະບັບເລກທີ 003/ປປທ, ລົງວັນທີ 26/12/2012.
- ອີງຕາມ ການສະເໜີໃຫ້ຄົ້ນຄວ້າຂອງກົມຄຸ້ມຄອງຊັບສິນຂອງລັດ ຄັ້ງວັນທີ 21/05/2020.

ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າການຈັດຕັ້ງປະຕິບັດ ວິທີຄິດໄລ່ ອັດຕາຈົດທະບຽນເອກະສານ ສັນຍາຊື້-ຂາຍ ປະເພດສິນຄ້າຕ່າງໆ, ສັນຍາການຄ້າຕ່າງໆ ທີ່ນຳເຂົ້າ ແລະ ສົ່ງອອກ ຢູ່ບັນດາສາງປ່ຽນຖ່າຍສິນຄ້າ ເພື່ອໃຫ້ມີຄວາມເປັນເອກະພາບຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ສາມາດເກັບລາຍຮັບເຂົ້າງົບປະມານໄດ້ຄົບຖ້ວນ ໄດ້ຮັບການຈັດຕັ້ງປະຕິບັດໄດ້ເປັນຢ່າງດີ, ມີລາຍລະອຽດດັ່ງນີ້:

1. ໃຫ້ບັນດາ ແຂວງ , ນະຄອນຫຼວງ ຂະແໜງຄຸ້ມຄອງຊັບສິນຂອງລັດ ທີ່ມີຈຸດບໍລິການ ຈົດທະບຽນສັນຍາຊື້ -ຂາຍ ປະເພດສິນຄ້າຕ່າງໆ ແລະ ສັນຍາການຄ້າຕ່າງໆ ທີ່ນຳເຂົ້າ ແລະ ສົ່ງອອກ ຢູ່ບັນດາສາງປ່ຽນຖ່າຍສິນຄ້າ ໃຫ້ຈັດຕັ້ງປະຕິບັດ ວິທີຄິດໄລ່ ອັດຕາຈົດທະບຽນເອກະສານ, ນຳໃຊ້ອັດຕາຄິດໄລ່ແບບເດັດຖານຕາມມູນຄ່າຊັບ, ເຊິ່ງໄດ້ກຳນົດໄວ້ໃນມາດຕາ 06 ຂໍ້ທີ 06 ຂອງລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ (ສະບັບປັບປຸງ) ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວັກທີ 03.
2. ວິທີຄິດໄລ່ດັ່ງນີ້ :

| ລາຍການ | ແຕ່ 10 ລ້ານກີບລົງມາ | ຫຼາຍກວ່າ 10-50 ລ້ານກີບ | ຫຼາຍກວ່າ 50-100 ລ້ານກີບ | ຫຼາຍກວ່າ 100 ລ້ານກີບຂຶ້ນໄປ |
|---|---|---|---|---|
| ສັນຍາກູ້ຢືມເງິນ ຫຼື ຊັບສິ່ງຂອງ | 10.000 ກີບ | 20.000 ກີບ | 50.000 ກີບ | 100.000 ກີບ |

| | | | | |
|---|---|---|---|---|
| ໜັງສືໂອນໜີ້ສິນ | 20.000 ກີບ | 50.000 ກີບ | 100.000 ກີບ | 200.000 ກີບ |
| ສັນຍາມອບ ຫຼື ໂອນກິດຈະການ ສັນຍາການຄ້າ, ການຜະລິດ, ການບໍລິການ ແລະ ການຂາຍຫຸ້ນ | 15.000 ກີບ | 25.000 ກີບ | 50.000 ກີບ | 100.000 ກີບ |
| ສັນຍາປະກັນໄພຕ່າງໆ | 10.000 ກີບ | 20.000 ກີບ | 25.000 ກີບ | 50.000 ກີບ |
| ສັນຍາຄ້ຳປະກັນ (ສັງຫາລິມະຊັບ) ຫຼື ບຸກຄົນ | 5.000 ກີບ | 10.000 ກີບ | 15.000 ກີບ | 20.000 ກີບ |
| ສັນຍາດຳເນີນການສຳຫຼວດອອກແບບຕ່າງໆ | 5.000 ກີບ | 10.000 ກີບ | 15.000 ກີບ | 20.000 ກີບ |

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າກົມຄຸ້ມຄອງຊັບສິນຂອງລັດ

ກະເສີມສີ ພົມມະວົງສາ
Kaseumsy PHOMMAVONGSA